# ບົດຂ່າວ

## ກອງປະຊຸມທົບທວນຜົນການດຳເນີນທຸລະກິດປະຈຳປີ 2019 ແລະ ຮັບຮອງແຜນການຂອງສາຂາທົ່ວລະບົບ ທຄຕລ ປະຈຳປີ 2020

ທີ່ນະຄອນຫຼວງວຽງຈັນ, ວັນທີ 30-31 ມັງກອນ 2020, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດປະຈຳປີ 2019 ແລະ ຮັບຮອງແຜນການຂອງສາຂາທົ່ວລະບົບ ປະຈຳປີ 2020, ພາຍໃຕ້ການເປັນປະທານ ຂອງ ທ່ານ ພູຊົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ, ໂດຍມີຄະນະອຳນວຍການ, ບັນດາທ່ານຄະນະພະແນກ, ສູນ ຈາກສຳນັກງານໃຫຍ່, ຄະນະສາຂາໃນທົ່ວລະບົບ ທຄຕລ ພ້ອມດ້ວຍພະນັກງານກ່ຽວຂ້ອງທັງໝົດລວມ 86 ທ່ານ.




ກອງປະຊຸມ ໄດ້ປະເມີນຜົນການເຄື່ອນໄຫວໃນແຕ່ລະດ້ານ, ວິເຄາະຜົນດຳເນີນທຸລະກິດ ຂອງ ທຄຕລ ໄລຍະປີ 2019 ແລະ ໄດ້ປຶກສາ ແລກປ່ຽນບົດຮຽນນຳກັນ ເພື່ອຫາວິທີແກ້ໄຂບັນຫາ ຂໍ້ຫຍຸ້ງຍາກຕ່າງໆ, ກອງປະຊຸມໄດ້ມອບຕົວເລກແຜນການ 2020 ໃຫ້ບັນດາສາຂາໂດຍອີງຕາມທ່າແຮງຂອງແຕ່ລະທ້ອງຖິ່ນຢ່າງເໝາະສົມ ໃຫ້ສາຂານຳໄປຜັນຂະຫຍາຍ ຄົ້ນຄວ້າການຈັດຕັ້ງປະຕິບັດໃຫ້

ບັນລຸແຜນທີ່ວາງໄວ້. ກອງປະຊຸມໄດ້ຮັບທິດຊີ້ນຳຈາກຜູ້ອຳນວຍການໃຫຍ່ - ຄະນະອຳນວຍການ ທຄຕລ ໃນການປະຕິບັດງານ, ເນັ້ນໜັກໃຫ້ບັນດາພະແນກການ ແລະ ສາຂາ ສືບຕໍ່ເອົາໃຈໃສ່ໃນການບໍລິການຂອງຕົນ, ຮັກສາຖານລູກຄ້າເກົ່າຂະຫຍາຍລູກຄ້າໃໝ່ ເອົາໃຈໃສ່ໃນການຂາຍຜະລິດຕະພັນຕ່າງໆຂອງ ທຄຕລ ໂດຍສະເພາະບັນດາຜະລິດຕະພັນເອເລັກໂທນິກ ເພື່ອສ້າງຄວາມສະດວກໃຫ້ລູກຄ້າ ທັງເປັນການປະຕິບັດນະໂຍບາຍຫຼຸດຜ່ອນການນຳໃຊ້ເງິນສົດໃນສັງຄົມ ແລະ ເອົາໃຈໃສ່ວຽກງານກວດກາ, ວຽກງານຄຸ້ມຄອງຄວາມສ່ຽງໃນແຕ່ລະດ້ານ.



ພະແນກຄົ້ນຄວ້າ-ພັດທະນາ ໄດ້ນຳສະເໜີກ່ຽວກັບວຽກງານການພັດທະນາວຽກງານສະຖິຕິຂອງ ທຄຕລ ທີ່ຈະເຮັດໃຫ້ບັນດາສາຂາຮັບຮູ້ໄດ້ເຖິງຂໍ້ມູນດ້ານຕ່າງໆ ເພື່ອຈະໄດ້ເປັນບ່ອນອີງໃນການວາງແຜນການພັດທະນາວຽກງານຂອງຕົນ.

ນອກຈາກນັ້ນ, ທ່ານ ນັນທະລາດ ແກ້ວປະເສີດ, ຮອງຜູ້ອຳນວຍການ ທຄຕລ ຍັງໄດ້ແຈ້ງຕໍ່ກອງປະຊຸມກ່ຽວກັບການພັດທະນາຜະລິດຕະພັນ OneCash ອອກມາຮັບໃຊ້ສັງຄົມ, ຜະລິດຕະພັນດັ່ງກ່າວເປັນ Function ໜຶ່ງຂອງ BCEL One ເພື່ອຮອງຮັບລູກຄ້າທີ່ບໍ່ມີບັນຊີນຳ ທຄຕລ ກໍ່ສາມາດເຮັດທຸລະກຳຜ່ານ BCEL One ໄດ້ ແລະ ສາມາດສະແກນຖອນເອົາເງິນຈາກຕູ້ ATM ຂອງ ທຄຕລ ຫຼື ຖອນເງິນຈາກຈຸດບໍລິການຂອງ ທຄຕລ ໄດ້.